# ການເຂົ້າໄປເອົາຫຼັກຖານການສັກວັກຊີນຕ້ານ COVID-19 ຂອງທ່ານ

ທ່ານສາມາດເຂົ້າໄປເອົາຫຼັກຖານສະຖານະພາບການສັກຢາຕ້ານ COVID-19 ຂອງທ່ານ ໂດຍຜ່ານ ລາຍງານແຈ້ງປະຫວັດການສັກຢາ (immunisation history statement) ຫຼື ໃບຮັບຮອງດິຈິຕອລ COVID-19 (COVID-19 digital certificate) ຂອງທ່ານ. ທ່ານບໍ່ຈຳເປັນຕ້ອງຈ່າຍເງິນເພື່ອເຂົ້າໄປເອົາຫຼັກຖານນີ້.

ວິທີທີ່ງ່າຍທີ່ສຸດໃນການເຂົ້າໄປເອົາລາຍງານຫຼືໃບຮັບຮອງຂອງທ່ານແມ່ນເຂົ້າໄປທາງອອນລາຍນ໌ ໂດຍໃຊ້ວິທີການໃດໜຶ່ງດັ່ງຂ້າງລຸ່ມນີ້:

- ທາງບັນຊີ myGov ຂອງທ່ານ
- ທາງ Express Plus Medicare ຜ່ານແອັບມືຖື.

ຜູ້ສັກຢາໃຫ້ທ່ານຕ້ອງໄດ້ລາຍງານການສັກຢາຂອງທ່ານໄປຫາ Australian Immunisation Register ກ່ອນທີ່ທ່ານຈະສາມາດເຂົ້າໄປເອົາລາຍງານຫຼືໃບຮັບຮອງນີ້ໄດ້. ອັນນີ້ອາດຈະໃຊ້ເວລາຮອດ 10 ມື້.

ລາຍງານ immunisation history statement ຂອງທ່ານ ຈະສະແດງໃຫ້ເຫັນເຖິງການສັກຢາທັງໝົດທີ່ທ່ານໄດ້ສັກເຊິ່ງໄດ້ຖືກບັນທຶກລົງໄວ້ໃນກອງທະບຽນບັນທຶກການສັກຢາກັນພະຍາດແຫ່ງອອສເຕຣເລັຍ.

COVID-19 digital certificate ຂອງທ່ານຈະສະແດງໃຫ້ເຫັນແຕ່ພຽງການສັກຢາຕ້ານ COVID-19 ຂອງທ່ານເທົ່ານັ້ນ. ທ່ານຈະສາມາດເຫັນໃບຮັບຮອງດິຈິຕອລຂອງທ່ານຫຼັງຈາກທີ່ທ່ານໄດ້ສັກຢາວັກຊີນຄົບຕາມຈຳນວນໂດສ ທີ່ຖືກອະນຸມັດໃຫ້ໃຊ້ໃນອອສເຕຣເລັຍ.

## ຈະເຂົ້າໄປເອົາ immunisation history statement ຫຼື COVID-19 digital certificate ຂອງທ່ານໂດຍວິທີໃດຖ້າທ່ານບໍ່ມີສິດໄດ້ຮັບ Medicare

ໂດຍການໃຊ້ myGov:

1. ເຊັນເຂົ້າໄປຫາບັນຊີ myGov ຂອງທ່ານ.
2. ເລືອກເອົາ ລິ້ງຄ໌ທີ່ນຳໄປຫາ **Proof of COVID-19 vaccination** ໂດຍຕົງ.
3. ເລືອກເອົາ ຊື່ຂອງທ່ານ, ແລະຫຼັງຈາກນັ້ນໃຫ້ເລືອກ **View immunisation history statement (PDF)** ຫຼື **View COVID-19 digital certificate (PDF).**

ໂດຍການໃຊ້ Express Plus Medicare mobile app:

1. ເຊັນເຂົ້າໄປຫາແອັບ.
2. ເລືອກເອົາ **Immunisation history** ຈາກ **Services.**

3. ເລືອກເອົາຊື່ຂອງທ່ານ, ແລະຫຼັງຈາກນັ້ນໃຫ້ເລືອກ **View immunisation history statement** ຫຼື **View COVID-19 digital certificate.**

ຖ້າທ່ານບໍ່ສາມາດເຂົ້າໄປເອົາ immunisation history statement ຂອງທ່ານທາງອອນລາຍນ໌ ແລະຕ້ອງການຄວາມຊ່ວຍເຫຼືອ, ໃຫ້ໂທລະສັບຫາ ເລກ **1800 653 809.**

## ການເອົາ COVID-19 digital certificate ຂອງທ່ານເຂົ້າໄປໄວ້ໃນກະເປົ໋າດີຈີຕອລ

ທ່ານສາມາດເອົາ COVID-19 digital certificate ຂອງທ່ານເຂົ້າໄປໄວ້ໃນ Apple Wallet ຂອງທ່ານ ຫຼື Google Pay ໄດ້ໂດຍໃຊ້ວິທີການຢ່າງໃດຢ່າງໜຶ່ງດັ່ງນີ້:

- ທາງ Express Plus Medicare mobile app
- ທາງບັນຊີ Medicare ອອນລາຍນ໌ຂອງທ່ານຜ່ານ myGov ໂດຍການໃຊ້ບຣາວເຊີຢູ່ໃນອຸປະກອນຂອງທ່ານ.

ຖ້າທ່ານໃຊ້ Express Plus Medicare mobile app:

1. ເລືອກ **Immunisation history** ຈາກ Services.
2. ເລືອກ**ຊື່**ຂອງທ່ານ, ຫຼັງຈາກນັ້ນແມ່ນ **View COVID-19 digital certificate.**
3. ເລືອກເອົາ **Add to Apple Wallet** ຫຼື **Save to phone** ສໍາລັບ Google Pay.

ຖ້າທ່ານໃຊ້ Medicare ອອນລາຍນ໌ຂອງທ່ານຜ່ານ myGov:

1. ເຊັນເຂົ້າໄປທີ່ບັນຊີ myGov ຂອງທ່ານໂດຍໃຊ້ບຣາວເຊີຢູ່ໃນອຸປະກອນຂອງທ່ານ.
2. ເລືອກ **Medicare.**
3. ເລືອກ **View immunisation history** ຢູ່ໃນແປັນສີ່ຫຼ່ຽມທີ່ມີປະຫວັດການສັກຢາ.
4. ເລືອກ**ຊື່**ຂອງທ່ານ.
5. ເລືອກເອົາ **Add to Apple Wallet** ຫຼື **Save to phone** ສໍາລັບ Google Pay.

ຖ້າທ່ານໃຊ້ອຸປະກອນ iOS, ທ່ານສາມາດໃຊ້ບຣາວເຊີຂອງ Safari ຫຼື Chrome. ຖ້າທ່ານໃຊ້ອຸປະກອນ Android, ທ່ານຕ້ອງໃຊ້ບຣາວເຊີຂອງ Chrome.

## ຖ້າທ່ານບໍ່ມີບັນຊີ Medicare online

ທ່ານຕ້ອງເຊື່ອມຕໍ່ Medicare ໄປຫາບັນຊີ myGov ຂອງທ່ານເພື່ອເປີດບັນຊີ Medicare online ຂອງທ່ານ.

ໃຫ້ເຊັນເຂົ້າໄປຫາບັນຊີ myGov ຂອງທ່ານ, ຫຼືສ້າງບັນຊີຂຶ້ນໃໝ່, ທີ່ **my.gov.au**

ຫຼັງຈາກນັ້ນທ່ານກໍສາມາດເຊື່ອມຕໍ່ຫາ Medicare ໄດ້ໂດຍການໃຊ້ຢ່າງໃດຢ່າງໜຶ່ງໃນຂ້າງລຸ່ມນີ້:

- ເລກບັດ Medicare ຂອງທ່ານແລະຂໍ້ມູນຈາກປະຫວັດ Medicare ຂອງທ່ານ
- ລະຫັດເຊື່ອມຕໍ່ ທີ່ ເຮົາອອກໃຫ້ ທ່ານທາງໂທລະສັບຫຼືທີ່ສູນບໍລິການ.

ເພື່ອຂໍຄວາມຊ່ວຍເຫຼືອໃນການເຊື່ອມຕໍ່ Medicare ໄປຫາ myGov, ໃຫ້ເຂົ້າໄປທີ່ **servicesaustralia.gov.au/medicareguides**

## ຈະເຂົ້າໄປເອົາ immunisation history statement ຫຼື COVID-19 digital certificate ທາງອອນລາຍນ໌ຂອງທ່ານໄດ້ຢ່າງໃດຖ້າທ່ານບໍ່ມີສິດໄດ້ຮັບ Medicare

ທ່ານສາມາດເຂົ້າໄປເອົາ immunisation history statement ຫຼື COVID-19 digital certificate ຂອງທ່ານທາງອອນລາຍນ໌ໄດ້ ດ້ວຍການໃຊ້ ບໍລິການ Individual Healthcare Identifiers (IHI) service ໂດຍຜ່ານບັນຊີ myGov ຂອງທ່ານ.

ທ່ານຕ້ອງສະເໜີລາຍລະອຽດໃຫ້ເຮົາຮູ້ຈາກເອກະສານການສະແດງຕົວຢ່າງໃດໜຶ່ງຂ້າງລຸ່ມນີ້ ເພື່ອຢັ້ງຢືນເອກະລັກສ່ວນຕົວຂອງທ່ານ:

  - ພາສປອດຂອງທ່ານ, ໂດຍໃຫ້ມີວີຊ່າເຂົ້າປະເທດອອສເຕຣເລັຍທີ່ຍັງໃຊ້ໄດ້
  - ໃບອະນຸຍາດຂັບຂີ່ຍານພາຫະນະທີ່ປະເທດອອສເຕຣເລັຍອອກໃຫ້.

ຫຼັງຈາກທີ່ເຮົາໄດ້ພິສູດເອກະສານການສະແດງຕົວຂອງທ່ານແລ້ວ, ເຮົາກໍຈະໃຊ້ຂໍ້ມູນຂອງທ່ານສ້າງ IHI ໃຫ້ທ່ານ. ນອກນີ້ ເຮົາກໍຈະເຊື່ອມ IHI service ຕໍ່ໄປຫາ myGov account ຂອງທ່ານ. ຫຼັງຈາກນັ້ນ ທ່ານກໍຈະສາມາດໃຊ້ IHI service ນີ້ ເພື່ອເຂົ້າໄປເບິ່ງ immunisation history statement ຫຼື COVID-19 digital certificate ຂອງທ່ານ:

1. ໃຫ້ເຊັນຊື່ເຂົ້າໄປຫາບັນຊີ myGov ຂອງທ່ານ.
2. ເລືອກເອົາລີ້ງຄ໌ເຊື່ອມໄປຫາ **Proof of COVID-19 vaccination** ໂດຍຕົງ.
3. ເລືອກເອົາ ຊື່ຂອງທ່ານ, ແລະຫຼັງຈາກນັ້ນກໍເລືອກເອົາ **View immunisation history statement (PDF)** ຫຼື **View COVID-19 digital certificate (PDF)**.

ທ່ານສາມາດເອົາ COVID-19 digital certificate ຂອງທ່ານເຂົ້າໄປໄວ້ໃນກະເປົ໋າດີຈີຕອລໂດຍການໃຊ້ IHI service ຜ່ານ myGov.

ນອກນີ້ ທ່ານກໍຍັງສາມາດເຂົ້າໄປເອົາສໍາເນົາຫຼັກຖານການສັກຢາວັກຊີນຕ້ານ COVID-19 ຂອງທ່ານໄດ້ໂດຍຜ່ານ My Health Record.

# ສຳລັບຂໍ້ມູນເພີ່ມເຕີມ

- ໃຫ້ໂທລະສັບຫາ Translating and Interpreting Service (TIS ທົ່ວປະເທດ) ທີ່ເລກໂທ 131 450 ເພື່ອເວົ້າກັບພວກເຮົາເປັນພາສາຂອງທ່ານເອງກ່ຽວກັບບໍລິການຕ່າງໆຂອງ Medicare
- ເຂົ້າໄປທີ່ **servicesaustralia.gov.au/covidvaccineproof** ເພື່ອເບິ່ງຂໍ້ມູນເພີ່ມ**ເຕີມ**ເປັນພາສາອັງກິດ
- ເຂົ້າໄປທີ່ **servicesaustralia.gov.au/yourlanguage** ເຊິ່ງເປັນບ່ອນ**ທີ່**ທ່ານສາມາດອ່ານ, ຟັງ ຫຼື ເບິ່ງ ວິດີໂອ ທີ່ມີຂໍ້ມູນ ເປັນ ພາສາຂອງທ່ານເອງ
- ເຂົ້າໄປທີ່ **australia.gov.au** ເພື່ອເບິ່ງຂ່າວອັບເດດລ່າສຸດແລະຄຳແນະນຳກ່ຽວກັບ COVID-19
- ໄປຢ້ຽມຢາມສູນບໍລິການແຫ່ງໃດແຫ່ງໜຶ່ງ.

ໂປຼດສັງເກດ: ການໂທລະສັບຈາກເລກໂທຕັ້ງໂຕະໃນເຮືອນຂອງທ່ານ ໄປຫາເລກໂທທີ່ເລີ່ມດ້ວຍເລກ ‘13’ ຈາກທົ່ວທຸກແຫ່ງໃນປະເທດອອສເຕຣເລັຍແມ່ນຈະຖືກເກັບເງິນຄ່າໂທທີ່ມີອັດຕາຕາຍໂຕ. ອັດຕານັ້ນອາດຈະແຕກຕ່າງຈາກລາຄາຂອງຄ່າໂທທ້ອງຖິ່ນແລະອາດຈະແຕກຕ່າງກັນໄປລະຫວ່າງບັນດາຜູ້ໃຫ້ບໍລິການໂທລະສັບ. ການໂທລະສັບຫາເລກທີ່ເລີ່ມຕົ້ນດ້ວຍ ‘1800’ ຈາກເລກໂທຕັ້ງໂຕະໃນເຮືອນຂອງທ່ານແມ່ນຟຣີ. ການໂທລະສັບຈາກໂທລະສັບສາທາລະນະຫຼືມືຖືອາດຈະຖືກຄິດໄລ່ເປັນເວລາແລະເກັບອັດຕາຄ່າໂທທີ່ແພງຂຶ້ນ.

# Get proof of your COVID-19 vaccination

You can get proof of your COVID-19 vaccination status through your immunisation history statement or COVID-19 digital certificate. You do not have to pay to get this proof.

The easiest way to get your statement or certificate is online using either:

- your myGov account
- the Express Plus Medicare mobile app.

Your vaccination provider needs to report your vaccinations to the Australian Immunisation Register before you can get your statement or certificate. This can take up to 10 days.

Your immunisation history statement shows all of the immunisations you have had that are recorded on the Australian Immunisation Register.

Your COVID-19 digital certificate only shows your COVID-19 vaccinations. You will be able to see your digital certificate after you have had all required doses of a vaccine that has been approved for use in Australia.

## How to get your immunisation history statement or COVID-19 digital certificate if you are eligible for Medicare

Using myGov:

1. Sign in to your myGov account.
2. Select the **Proof of COVID-19 vaccination** quick link.
3. Select your name, and then **View immunisation history statement (PDF) or View COVID-19 digital certificate (PDF)**.

Using the Express Plus Medicare mobile app:

1. Sign in to the app.
2. Select **Immunisation history** from **Services**.
3. Select your name, and then **View immunisation history statement or View COVID-19 digital certificate**.

If you cannot get your immunisation history statement online or need help, call **1800 653 809**.

### Adding your COVID-19 digital certificate to a digital wallet

You can add your COVID-19 digital certificate to your Apple Wallet or Google Pay using either:

- the Express Plus Medicare mobile app
- your Medicare online account through myGov using a browser on your device.

If you are using the Express Plus Medicare mobile app:

1. Select **Immunisation history** from Services.
2. Select your **name**, then **View COVID-19 digital certificate**.

3. Select either **Add to Apple Wallet** or **Save to phone** for Google Pay.

If you are using your Medicare online account through myGov:

1. Sign in to your myGov account using a browser on your device.
2. Select **Medicare**.
3. Select **View immunisation history** on the Immunisation history tile.
4. Select your **name**.
5. Select either **Add to Apple Wallet** or **Save to phone** for Google Pay.

If you are using an iOS device, you can use the Safari or Chrome browsers. If you are using an Android device, you need to use the Chrome browser.

### If you do not have a Medicare online account

You need to link Medicare to your myGov account to set up your Medicare online account.

Sign in to, or create, your myGov account at **my.gov.au**

You can then link Medicare using either:

- your Medicare card number and information from your Medicare history
- a linking code we have given you either over the phone or at a service centre.

For help linking Medicare to myGov, go to **servicesaustralia.gov.au/medicareguides**

## How to get your immunisation history statement or COVID-19 digital certificate online if you are not eligible for Medicare

You can get your immunisation history statement or COVID-19 digital certificate online using the Individual Healthcare Identifiers (IHI) service through your myGov account.

You need to give us details from one of the following identity documents to verify your identity:

- your passport, with your valid Australian visa
- your Australian driver licence.

Once we have verified your identity, we will use your details to create your IHI. We will also link the IHI service to your myGov account. Then you can use the IHI service to view your immunisation history statement or COVID-19 digital certificate:

1. Sign in to your myGov account.
2. Select the **Proof of COVID-19 vaccination** quick link.
3. Select your name, and then **View immunisation history statement (PDF) or View COVID-19 digital certificate (PDF)**.

You can add your COVID-19 digital certificate to a digital wallet using the IHI service through myGov.

You can also get a copy of your COVID-19 vaccination proof through My Health Record.

## For more information

- call the Translating and Interpreting Service (TIS National) on 131 450 to speak with us in your language about Medicare services
- go to **servicesaustralia.gov.au/covidvaccineproof** for more information in English
- go to **servicesaustralia.gov.au/yourlanguage** where you can read, listen to or watch videos with information in your language
- go to **australia.gov.au** for the latest COVID-19 updates and advice
- visit a service centre.

Note: calls from your home phone to ‘13’ numbers from anywhere in Australia are charged at a fixed rate. That rate may vary from the price of a local call and may also vary between telephone service providers. Calls to ‘1800’ numbers from your home phone are free. Calls from public and mobile phones may be timed and charged at a higher rate.